# ຊີວິດການເປັນຢູ່ຂອງພວກເຮົາ ຈະນັບມື້ນັບດີຂຶ້ນກວ່າເກົ່າ

ນ້ຳປະປາທີ່ໃສສະອາດໄດ້ໄຫຼເຂົ້າທຸກຫຼັງຄາເຮືອນ, ແສງໄຟຟ້າໄດ້ເຮັດໃຫ້ທົ່ວບ້ານຮຸ່ງຂຶ້ນ, ສັນຍານໂທລະພາບທີ່ຊັດແຈ້ງເຮັດໃຫ້ຊາວບ້ານທັງຫຼາຍສາມາດຕິດຕາມຂ່າວ ແລະ ຮຽນຮູ້ເຕັກໂນໂລຊີໃໝ່, ສູນປິ່ນປົວທີ່ສ້າງໃໝ່ໄດ້ອຳນວຍຄວາມສະດວກໃຫ້ແກ່ຊາວບ້ານທັງຫຼາຍ... ຫວ່າງມໍ່ໆມານີ້, ຊີວິດການເປັນຢູ່ຂອງຊາວບ້ານໃນ 40 ກວ່າບ້ານຢູ່ແຂວງຜົ້ງສາລີ, ແຂວງຫຼວງນ້ຳທາ, ແຂວງອຸດົມໄຊ ແລະ ແຂວງຫົວພັນ ທາງພາກເໜືອຂອງລາວໄດ້ເກີດມີການປ່ຽນແປງແບບບໍ່ເຄີຍມີມາກ່ອນ. ການປ່ຽນແປງເຫຼົ່ານີ້ແມ່ນຍ້ອນວ່າ ຈີນໄດ້ປະຕິບັດໂຄງການໄລຍະ 2 ໃນການຊ່ວຍເຫຼືອລາວສ້າງພື້ນຖານໂຄງລ່າງຫຼຸດຜ່ອນຄວາມທຸກຍາກຢູ່ຊົນນະບົດທາງພາກເໜືອຂອງລາວ.

## ພວກເຮົາຈະມີນ້ຳປະປາສົ່ງເຂົ້າເຮືອນເລີຍ

ເດືອນທັນວາ ປີ 2023, ທີມງານກຸ່ມບໍລິສັດລົງທຶນການກໍ່ສ້າງຢຸນນານ ຈຳກັດ ໄດ້ເດີນທາງໄປເຖິງເຂດພູດອຍທາງພາກເໜືອຂອງລາວເປັນຄັ້ງທຳອິດ, ໂດຍໄດ້ນຳເອົາເຮືອບິນບໍ່ມີຄົນຂັບ ແລະ ເຄື່ອງວັດແທກ GPS, ຂຶ້ນພູລົງຫ້ວຍ ເພື່ອເລືອກເສັ້ນທາງວາງທໍ່ສົ່ງນ້ຳປະປາ ແລະ ສາຍສົ່ງໄຟຟ້າ, ໄດ້ຂຸດຂຸມຢູ່ເຂດພູດອຍ, ໄດ້ແລ່ນສາຍສົ່ງໄຟຟ້າຂ້າມແມ່ນ້ຳລຳເຊ, ໄດ້ເດີນຜ່ານປ່າໄມ້ທີ່ຕຶບໜາໃນຕອນກາງເວັນ ແລະ ໄດ້ຊຳລະຕົວເລກຂໍ້ມູນຕ່າງໆໃນຜ້າເຕັ້ນຊົ່ວຄາວໃນຕອນກາງຄືນ. ໃຊ້ເວລາພຽງແຕ່ 23 ວັນເທົ່ານັ້ນ, ກໍສຳເລັດວຽກງານສຳຫຼວດວັດແທກຢູ່ 40 ບ້ານ.

ອ່າງນ້ຳຂອງບ້ານກົກໄມ້ໃຫຍ່ ຕັ້ງຢູ່ເທິງພູທີ່ສູງຈາກລະດັບໜ້ານ້ຳທະເລປະມານ 1.400 ແມັດ, ແຕ່ບ້ານພັດຕັ້ງຢູ່ເຂດຕີນພູ, ຕ້ອງວາງທໍ່ສົ່ງນ້ຳປະປາຍາວເຖິງ 7,3 ກິໂລແມັດ. ທີມງານໄດ້ຄົ້ນຫາວິທີໃໝ່ ໂດຍໄດ້ຂຸດຂຸມ ແລະ ສ້າງບ່ອນກວດກາຫຼາຍຈຸດ ເພື່ອຮັບປະກັນບໍ່ໃຫ້ດິນເຈື່ອນທຳລາຍທໍ່ສົ່ງນ້ຳ ແລະ ຮັບປະກັນໃຫ້ນ້ຳປະປາໄຫຼລົງຢ່າງສະດວກ. ເດືອນມີນາປີ 2025, ເມື່ອນ້ຳປະປາທີ່ໃສສະອາດໄຫຼເຂົ້າອ່າງນ້ຳຂອງບ້ານແລ້ວ, ທ້າວ ອາຄາງ ຊາວບ້ານເວົ້າດ້ວຍຄວາມດີໃຈວ່າ: "ບ້ານເຮົາມີນ້ຳປະປາສົ່ງເຂົ້າເຖິງເຮືອນແລ້ວ, ຈະບໍ່ຕ້ອງອີງໃສ່ນ້ຳຝົນອີກແລ້ວ."

ບ້ານອາແປດ ຢູ່ເມືອງບຸນເໜືອແຂວງຜົ້ງສາລີ, ສາຍສົ່ງໄຟຟ້າຕ້ອງຜ່ານປ່າຕຶບດົງໜາ. ພະນັກງານຕ້ອງເປ້ເຄື່ອງມືຕ່າງໆ ແລະ ສາຍສົ່ງໄຟຟ້າ, ເດີນຜ່ານປ່າໄມ້, ເມື່ອຂຶ້ນພູທີ່ສູງຊັນ, ຈຳເປັນຕ້ອງເອົາເຊືອກມັດໃສ່ຮ່າງກາຍ ເພື່ອຂົນເສົາໄຟຟ້າຂຶ້ນພູເທື່ອລະໜ້ອຍ.

ທີມງານຕິດຕັ້ງເຄື່ອງຮັບສັນຍານໂທລະພາບຈຳເປັນຕ້ອງປີນຂຶ້ນຫຼັງຄາເຮືອນຂອງທຸກຄອບຄົວ ເພື່ອປັບເຄື່ອງຮັບສັນຍານໂທລະພາບ. ທ້າວຄຳ ຊາວບ້ານຍັງຈື່ໄດ້ວ່າ: ເພື່ອໃຫ້ໄດ້ຮັບສັນຍານໂທລະພາບທີ່ຈະແຈ້ງ, ວິຊາການໄດ້ຕາກແດດປັບຫຼາຍເທື່ອ, ໂສ້ງເສື້ອພະນັກງານປຽກໝົດຍ້ອນນ້ຳເຫື່ອ, ແຕ່ພວກເພິ່ນກໍບໍ່ໄດ້ທໍ້ຖອຍ." ປັດຈຸບັນ, ເມື່ອເປີດເບິ່ງໂທລະພາບ, ຈະມີຂ່າວສາລະໜ້າຮູ້ຕ່າງໆຂອງລາວ, ພ້ອມນີ້ຍັງມີລາຍການສອນເຕັກນິກການປູກຝັງຂອງຈີນ, ມີຄວາມສະດວກສະບາຍທີ່ສຸດ!"

ສູນການປິ່ນປົວຂັ້ນບ້ານ 19 ແຫ່ງໃນໂຄງການຊ່ວຍເຫຼືອໄດ້ຕັ້ງຢູ່ 4 ແຂວງ, ທີມງານໄດ້ວາງແຜນການອອກແບບສູນການປິ່ນປົວ 19 ສະບັບ ທີ່ແທດເໝາະກັບຄວາມຕ້ອງການຂອງແຕ່ລະບ້ານ ໂດຍອີງຕາມຈຳນວນປະຊາກອນບ້ານ ແລະ ປະເພດພະຍາດທີ່ມັກເກີດຢູ່ແຕ່ລະບ້ານ. ເມື່ອໂຄງສ້າງຫຼັກຂອງສູນປິ່ນປົວບ້ານຫ້ວຍລາວ ທີ່ຢູ່ແຂວງອຸດົມໄຊ ໄດ້ສ້າງສຳເລັດແລ້ວ, ຊາວບ້ານທັງຫຼາຍໄດ້ນຳເອົາເຂົ້າໜຽວ ແລະ ໝາກໄມ້ມາຕ້ອນພະນັກງານກໍ່ສ້າງຈີນດ້ວຍວິທີແບບດັ້ງເດີມຂອງລາວ.






**ເນື້ອໃນເພີ່ມເຕີມ:**

ໂຄງການຊ່ວຍເຫຼືອລາວສ້າງພື້ນຖານໂຄງລ່າງຫຼຸດຜ່ອນຄວາມທຸກຍາກຢູ່ຊົນນະບົດທາງພາກເໜືອ ແມ່ນໜຶ່ງໃນໂຄງການຊຸດທຳອິດທີ່ລັດຖະບານຈີນຊ່ວຍເຫຼືອລາວປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ເຊິ່ງມີຈຸດປະສົງຊ່ວຍເຫຼືອ 100 ບ້ານຢູ່ເຂດພູດອຍທຸກຍາກ ແລະ ເຂດທຸກຍາກທີ່ລຽບຕາມເສັ້ນທາງລົດໄຟລາວ-ຈີນ ສ້າງລະບົບສະໜອງນ້ຳ, ຕາຂ່າຍສົ່ງໄຟຟ້າ, ສ້າງສູນການປິ່ນປົວຂັ້ນບ້ານ ແລະ ຕິດຕັ້ງສັນຍານໂທລະພາບດີຈີຕອນ. ໃນນັ້ນ, ໂຄງການໄລຍະ 2 ຕົ້ນຕໍແມ່ນສະໜອງສິ່ງກໍ່ສ້າງ ແລະ ອຸປະກອນຫຼຸດຜ່ອນຄວາມທຸກຍາກ ເຊັ່ນ: ໂທລະພາບດີຈີຕອນ, ສະໜອງໄຟຟ້າ, ສະໜອງນ້ຳປະປາ ແລະ ສ້າງສູນການປິ່ນປົວຂັ້ນບ້ານໃຫ້ແກ່ 40 ບ້ານຢູ່ແຂວງຜົ້ງສາລີ, ແຂວງຫຼວງນ້ຳທາ, ແຂວງອຸດົມໄຊ ແລະ ແຂວງຫົວພັນ ທີ່ຢູ່ທາງພາກເໜືອຂອງລາວ.

## ພວກເຮົາຮູ້ສຶກໄວ້ວາງໃຈທີ່ສຸດ

ວັນທີ 26 ສິງຫາປີ 2025, ໂຄງການໄລຍະ 2 ໃນການຊ່ວຍເຫຼືອລາວສ້າງພື້ນຖານໂຄງລ່າງຫຼຸດຜ່ອນຄວາມທຸກຍາກຢູ່ຊົນນະບົດທາງພາກເໜືອຂອງລາວ ທີ່ຮັບເໝົາກໍ່ສ້າງໂດຍກຸ່ມບໍລິສັດລົງທຶນການກໍ່ສ້າງຢຸນນານ ຈຳກັດ ໄດ້ສ້າງສຳເລັດ ແລະ ມອບໃຫ້ຝ່າຍລາວ. ປະຊາຊົນພາຍໃນບ້ານກົກໄມ້ໃຫຍ່ຈະໄດ້ຊົມໃຊ້ນ້ຳປະປາທີ່ສະອາດ, ທໍ່ສົ່ງນ້ຳປະປາໄດ້ເນັ່ງໄປຫາທຸກຫຼັງຄາເຮືອນ, ທາງໂຮງຮຽນກໍໄດ້ຕິດຕັ້ງອ່າງລ້າງມືໃໝ່, ນ້ອງນ້ອຍນັກຮຽນທັງຫຼາຍລ້າງມືໄດ້ຕາມສະບາຍໃນເວລາພັກຮຽນ.

ຕອນຄ່ຳ, ໄຟຟ້າແຄມທາງຂອງບ້ານ ຮຸ່ງແຈ້ງດີ, ທຸກຫຼັງຄາເຮືອນໃນບ້ານກໍມີໄຟຟ້າໃຊ້, ມີຊາວບ້ານຈຳນວນບໍ່ໜ້ອຍໄດ້ນັ່ງເບິ່ງໂທລະພາບຢູ່ໃນເຮືອນຂອງຕົນ. ທ້າວ ເຄັນ ຊາວບ້ານໄດ້ຖ່າຍຮູບສວນອ້ອຍຂອງຕົນສົ່ງໃຫ້ນັກທຸລະກິດໂດຍຜ່ານໂທລະສັບມືຖື. ລາວກ່າວວ່າ: "ເມື່ອມີໄຟຟ້າແລ້ວ, ຈະສາມາດສາກໄຟໂທລະສັບໄດ້ຕາມສະບາຍ, ປັດຈຸບັນ, ນັ່ງຢູ່ເຮືອນກໍສາມາດຕິດຕໍ່ນັກທຸລະກິດໄດ້ຕາມສະບາຍ, ອ້ອຍກໍຂາຍໄດ້ລາຄາດີສົມຄວນ!" ນາຍບ້ານຍັງກຽມຈະພັດທະນາການທ່ອງທ່ຽວຂອງບ້ານ. ທ່ານກ່າວວ່າ: "ນັກທ່ອງທ່ຽວເຂົ້າມາທ່ຽວໃນບ້ານ ແລະ ພັກໃນບ້ານ, ຊີວິດການເປັນຢູ່ຂອງພວກເຮົາກໍຈະນັບມື້ນັບດີຂຶ້ນກວ່າເກົ່າ."

ຢູ່ສູນການປິ່ນປົວຂອງບ້ານ, ຫ້ອງປິ່ນປົວໃໝ່ມີເຄື່ອງອຸປະກອນບົ່ງມະຕິພະຍາດທີ່ໃໝ່ອ່ຽມ, ໃນຫ້ອງຄົນເຈັບມີຕຽງ ແລະ ຕູ້. ທ່ານໝໍໄດ້ກວດສຸຂະພາບໃຫ້ແກ່ຜູ້ເຖົ້າໃນບ້ານ ແລະ ກ່າວວ່າ: "ປັດຈຸບັນ, ມີອຸປະກອນກູ້ຊີບດ່ວນ, ສາມາດປົວບາດແຜໄດ້ຢ່າງທັນການ ແລະ ຍັງສາມາດກວດສຸຂະພາບຂັ້ນພື້ນຖານໃຫ້ແກ່ຊາວບ້ານ. ໃນບ້ານບໍ່ຈຳເປັນຕ້ອງໄປປົວພະຍາດຢູ່ໃນເມືອງທີ່ໄກຈາກບ້ານຫຼາຍສິບກິໂລແມັດ ໃນເວລາເຈັບເປັນ." ນາງມີນາ ຊາວບ້ານແຂວງອຸດົມໄຊກ່າວວ່າ: "ເມື່ອມີ 'ປ້ອມປ້ອງກັນຊີວິດ' ແຫ່ງນີ້ແລ້ວ, ພວກເຮົາມີຄວາມຮູ້ສຶກໄວ້ວາງໃຈຫຼາຍ."

ຈາກຜູ້ກໍ່ສ້າງທີ່ແຂ່ງແດດແຂ່ງຝົນ, ເຖິງຊາວບ້ານທີ່ຮູ້ສຶກດີໃຈຈົນມີນ້ຳຕາເຕັມເບົ້າ, ເມື່ອມີນ້ຳປະປາເຂົ້າເຖິງເຮືອນ, ຈາກເດັກນ້ອຍທີ່ເຄີຍຮຽນໜັງສືຢູ່ຂ້າງຕະກຽງ ເຖິງໄຟຟ້າຖືກສົ່ງເຂົ້າທຸກຫຼັງຄາເຮືອນ, ສູນການປິ່ນປົວພະຍາດຂັ້ນບ້ານຈາກບໍ່ມີເຖິງມີ ທັງໝົດເຫຼົ່ານີ້ໄດ້ປ່ຽນແປງໂສມໜ້າຂອງຊົນນະບົດຫຼາຍແຫ່ງຢູ່ທາງພາກເໜືອຂອງລາວ ແລະ ໄດ້ເຮັດໃຫ້ບ້ານເຫຼົ່ານີ້ມີຄວາມຈະເລີນຮຸ່ງເຮືອງກວ່າເກົ່າ ພ້ອມທັງໄດ້ສະແດງໃຫ້ເຫັນເຖິງມິດຕະພາບອັນເລິກເຊິ່ງລະຫວ່າງສອງປະເທດ ລາວ ແລະ ຈີນ ທີ່ເປັນປະເທດບ້ານໃກ້ເຮືອນຄຽງທີ່ດີ, ເພື່ອນມິດທີ່ດີ, ສະຫາຍທີ່ດີ ແລະ ຄູ່ຮ່ວມມືທີ່ດີ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com

